ປະຕິທິນລະດູການປູກພືດ ແລະ ເກັບກ່ຽວ

ປະເພດພືດທີ່ປູກ	ລະດຸເກັບກ່ຽວ (ມື້)	ວິທີການເພາະປູກ
1 ມັນດ້າງ	90-170	ຮາກ ຫຼື ເຄືອ
2 ມັນດ້າງເຫຼືອງ	90-170	ຮາກ ຫຼື ເຄືອ
3 ເຜືອກ	150-180	ຮາກ ຫຼື ເຄືອ
4 ຖົ່ວດຳ	60-90	ແກ່ນພືດ
5 ຖົ່ວແດງ	75-90	ແກ່ນພືດ
6 ຖົ່ວຂຽວ	65-120	ແກ່ນພືດ
7 ຖົ່ວເຫຼືອງ	65-75	ແກ່ນພືດ
8 ຖົ່ວດິນ	95-110	ແກ່ນພືດ
9 ໝາກງາ	60-120	ແກ່ນພືດ
10 ຜັກຄະ	3-6 ເດືອນ	ກ້ານ, ແກ່ນພືດ
11 ຜັກຫົມ	20-35	ແກ່ນພືດ
12 ໃບຂີ້ເຫຼັກ	60-90	ແກ່ນພືດ
13 ຜັກກາດດອກ	60-90	ແກ່ນພືດ
14 ກະລຳປີ	75-100	ແກ່ນພືດ
15 ຜັກກາດຂາວ	40-60	ແກ່ນພືດ

ລະດູການປູກ ລະດູການເຕີບໃຫຍ່ ລະດູການເກັບກ່ຽວ

ຮາກ ຫຼື ເຄືອ ແກ່ນພືດ ກ້ານ ຕົ້ນກ້າ

ບົດທີ 3.5: ປະຕິທິນການປູກພືດ

ຈຸດປະສົງ: ເພື່ອປຶກສາຫາລືກ່ຽວກັບໄລຍະການປູກ, ການເຕີບໃຫຍ່ ແລະ ການເກັບກ່ຽວຂອງ 10-15 ອາຫານຕາມບຸລິມະສິດຂອງບ້ານ.

ຂັ້ນຕອນ: ນຳໃຊ້ບັດຮູບອາຫານຈາກກິດຈະກຳກ່ອນໜ້ານີ້, ພືດທີ່ຊາວບ້ານຕ້ອງການປູກຈາກກິດຈະກຳໃນບົດທີ (3,4) ຜ່ານມາ. (ພືດພັກທີ່ຈະປູກເຫຼົ່ານີ້ຕ້ອງສາມາດເກັບກ່ຽວໄດ້ຕະຫຼອດປີໃນໄລຍະເວລາທີ່ແຕກຕ່າງກັນ) ຫຼັງຈາກນັ້ນ, ແຂວນຮູບແຜ່ນໃຫຍ່ (ໂປສເຕີ) ທີ່ຫວ່າງເປົ່ານັ້ນ ແລ້ວຂຽນຊື່ພືດ ພ້ອມທັງໄລຍະເວລາເດືອນທີ່ຈະປູກ, ການເຕີບໃຫຍ່ ແລະ ໄລຍະເວລາເດືອນທີ່ຈະເກັບກ່ຽວພືດເຫຼົ່ານັ້ນ ຕາມຂໍ້ມູນອ້າງອີງໃນບັດຮູບ. ສາມາດຂຽນຄຳເວົ້າ ຫຼື ໝາຍຂີດໃສ່ໄລຍະເວລາເດືອນໄດ້ເລີຍ.

ອຸປະກອນ: ປະຕິທິນລະດູການປູກພືດ ແລະ ເອກະສານອ້າງອີງ

ຄຳຖາມ

ບັດອາຫານແຕ່ລະບັດໃຫ້ຖາມ:

- ເຮົາຄວນປູກພືດຜັກໃນເວລາໃດ?
- ເຮົາມີວິທີການຂະຫຍາຍພັນພືດແນວໃດແດ່?
- ພືດຜັກໃຊ້ເວລາເຕີບໃຫຍ່ດົນນານປານໃດ?
- ແລະເມື່ອໃດຄວນເກັບກ່ຽວມັນ?

ສະຫຼຸບ

ເມື່ອຕື່ມຂໍ້ມູນໃສ່ໃນປະຕິທິນລະດູການແລ້ວ, ມັນເຮັດໃຫ້ເຮົາຮູ້ວ່າອາຫານບາງຊະນິດ ສາມາດປູກ ຫຼື ເກັບກ່ຽວໃນຊ່ວງເວລາທີ່ແຕກຕ່າງກັນຕະຫຼອດປີ. ສະນັ້ນ, ພືດຜັກເຫຼົ່ານັ້ນຈຶ່ງສາມາດສະໜອງທາງເລືອກໃຫ້ເຮົາໄດ້ກິນໃນລະດູການທີ່ຂາດແຄນ. ເມື່ອຮັບຮູ້ຂໍ້ມູນນີ້ແລ້ວ, ໃຫ້ຄິດເບິ່ງວ່າອາຫານຊະນິດໃດທີ່ເຮົາ ແລະ ຄອບຄົວຂອງເຮົາສາມາດປູກໃນສວນຄົວໄວ້ກິນໄດ້ຕະຫຼອດປີ.